Please
to Mrs Marie Mc FRANK Tel:
American Pilot

ພຈ. ໐໕. ໑໑

ນັບຖື ໂນວີ ໂກລ ແລະຄອບຄົວ Dear Mrs Movi

ຂໍໂທດຫລາຍໆທີ່ຂ້ອຍຂຽນເປັນພາສາລາວມາຫາເຈົ້າ ເພື່ອສົ່ງຂ່າວຂອງ ທ່ານແຟລງ ໂກລ,ສາມີຂອງເຈົ້າ ເພາະຂ້ອຍບໍ່ມີຄວາມສາມາດຂຽນເປັນພາສາອັງກິດໄດ້ ແລະຫວັງວ່າຂຽນເປັນພາສາລາວເຈົ້າຄົງຈະເຂົ້າໃຈດີຫລາຍ ກວ່າໃຫ້ຂ້ອຍຂຽນເປັນພາສາອັງກິດ.

ຈົດໝາຍທຸກໆສະບັບທີ່ເຈົ້າສົ່ງໃຫ້ນາຍເຣືອງເດຊ ແລະ ທ່ານແຟລງ ເກລ ນັ້ນຂ້ອຍໄດ້ຮັບທຸກໆສະບັບ ແລະກໍ ໄດ້ດຳເນີນໄປດ້ວຍຄວາມຍາກລຳບາກ ແລະດຽວນີ້ພວກຂ້ອຍກໍຍັງດຳເນີນສືບຕໍ່ຢູ່ເລື້ອຍໆ ແຕ່ຄົງຈະເປັນໄປໄດ້ຍາກ ເພາະພວກຂ້ອຍຂາດເຂີນງົບປະມານໃນການໃຊ້ຈ່າຍຫລາຍຢ່າງ ເຈົ້າກໍຄົງຊາບດີ ເພາະທາງພວກຂ້ອຍບໍ່ເຄີຍໄດ້ຮັບ ການຊ່ວຍເຫລືອທາງດ້ານການເງິນແມ່ນແຕ່ບາທດຽວເລີຍ, ຂ້ອຍບອກໃຫ້ຊາບແນວນີ້ ບໍ່ແມ່ນຂ້ອຍຕ້ອງການເງິນຈາກ ເຈົ້າເພື່ອໄປໃຊ້ຈ່າຍສ່ວນຕົວດອກ ເພາະຄວາມຈິງເປັນແນວໃດເຈົ້າກໍຄົງຊາບດີ ນັບແຕ່ກ້າວແຣກອອກຈາກບ້ານຕ້ອງ ໃຊ້ເງິນເປັນຄ່າເດີນທາງ, ຄ່າກິນ, ຄ່າທີ່ພັກ. ສຳຣັບຂ້ອຍໄດ້ເດີນທາງເຂົ້າໄປເຖິງແຂວງອຸດົມໄຊຍ໌ ຫ່າງຈາກທີ່ ທ່ານແຟລງຢູ່ປະມານບໍ່ເຖິງ ໑໐໐ ກິໂລແມດ ແຕ່ເປັນທາງປ່າທາງດອຍໄດ້ໃຊ້ເວລາເດີນດ້ວຍຕີນ ເພາະທ່ານ ແຟລງ ອາໄສຢູ່ຣະຫວ່າງເຂດແດນແຂວງອຸດົມໄຊ ແລະແຂວງຟົ້ງສາລີຕິດຕໍ່ກັນຢູ່ຈອມດອຍສູງ ຊຶ່ງຊົນເຜົ່າອີກໍອາໄສຢູ່ ຂ້ອຍໄດ້ໃຫ້ເພື່ອນຮ່ວມງານຂອງຂ້ອຍໄປເຖິງທີ່ຢູ່ຂອງທ່ານແຟລງສາມຄັ້ງແລ້ວ ແຕ່ນາຍແຟລງບໍ່ຍອມໃຫ້ຫລັກຖານຫຍັງ ກັບພວກຂ້ອຍເລີຍ ເພາະລາວຢ້ານອີກທີຟີລຂອງນາຍ........ຫົວໜ້າເຜົ່າອີກໍຈະຂ້າຖິ້ມ ເພາະລາວຄຶກວ່າຈະຂ້າຖິ້ມ ຕລອດ ສະນັ້ນ ທ່ານແຟລງຈຶ່ງບໍ່ຍອມໃຫ້ຫລັກຖານຫຍັງກັບຂ້ອຍ ຈົນເຖິງວັນນີ້ຂ້ອຍກໍຍັງບໍ່ໝັ້ນໃຈວ່າເຊລີຍເສິກອະເມຣິກາ ຄົນນັ້ນ ຈະແມ່ນນາຍແຟລງຈິງຫລືບໍ່? ຂ້ອຍກໍຍັງຮັບຮອງບໍ່ໄດ້ເຖິງຮ້ອຍເປີເຊັນ ຈົນເຖິງເວລານີ້ຜູ້ຮ່ວມງານຂອງຂ້ອຍ ຢູ່ແຂວງອຸດົມໄຊສາມຄົນກໍພົບບັນຫາຫຍຸ້ງຍາກລຳບາກ ເພາະຫົວໜ້າອີກໍຄົນນັ້ນມາລາຍງານຕຳຫລວດແຂວງອຸດົມໄຊວ່າ ຜູ້ຮ່ວມງານຂອງຂ້ອຍໄປຊອກຫາເຊລີຍເສິກຂອງທະຫານອະເມຣິກາ ເພາະມີຄັ້ງນຶ່ງຫົວໜ້າອີກໍນັ້ນຈັບໄດ້ເອກະສານ ແລະຮູບພາບຄອບຄົວ ແລະຈົດໝາຍທີ່ເຈົ້າສົ່ງໃຫ້ເອົາໄປໃຫ້ທ່ານແຟລງ ແຕ່ທ່ານແຟລງ ຍັງບໍ່ທັນໄດ້ອ່ານ ຫົວໜ້າຊົນ ເຜົ່າຄົນນັ້ນຈັບໄດ້ກ່ອນ ແລະຂູ່ຈະເອົາເງິນຈາກຄົນນັ້ນ ຫົກລ້ານກີບ ແຕ່ພວກຂ້ອຍບໍ່ມີເງິນໃຫ້ມັນຈຶ່ງໄປແຈ້ງຕຳຣວດ ເພາະຕຳຣວດພ້ອມດ້ວຍເຈົ້າໜ້າທີ່ປົກຄອງແຂວງອຸດົມໄຊກໍຍຳເກງ ແລະຢ້ານກົວອີກທີຟີລຂອງມັນ ເພາະພື້ນທີ່ຂອງມັນ ອຸດົມສົມບູນດ້ວຍການປູກຝິ່ນສົ່ງອອກຂາຍໂດຍລັດມີລາຍໄດ້ສ່ວນກັນ.

ແຕ່ລະຄັ້ງກ່ອນຈະເດີນທາງໄປລາວແຂວງອຸດົມໄຊຂ້ອຍຕ້ອງເດີນທາງເຂົ້າກຸງເທບເພື່ອຂໍວີຊາຄ່າວີຊາຈາກ ຊຽງຂອງເຖິງກຸງເທບຣາຄາລົດບັສ ໔໕໐,໐໐ບາທຄ່າໂຮງແຮມ ໕໐໐,໐໐ບາທ ຄ່າທຳນຽມວີຊາ ໓໐໐,໐໐ບາທ ຄ່າເຄື່ອງບິນຈາກຫ້ວຍຊາຍໄປແຂວງອຸດົມໄຊ ໔໑,໐໐ດອລລາ ຄ່າພັກໂຮງແຮມທີ່ແຂວງອຸດົມໄຊ ໑໕.໐໐໐,໐໐ກີບ ແລະຈາກຕົວເມືອງໄປຫາທາງຂຶ້ນໄປຫາທ່ານແຟລງຢູ່ ໔໔ ກິໂລແມດ ແລະຈາກນັ້ນຕ້ອງເດີນທາງດ້ວຍຕີນຂຶ້ນ ດອຍ ແລະຕ້ອງເຂົ້າໃຈວ່າການຄົມມະນາຄົມຂອງລາວນັ້ນບໍ່ໄດ້ສະດວກສະບາຍຄືປະເທດສະຫະຣັຖແຕ່ຢ່າງໃດ?

ສະນັ້ນ ບັນຫາເລື່ອງນີ້ຂ້ອຍຍັງໃຫ້ຄວາມຕອບອັນແນ່ນອນບໍ່ທັນໄດ້ ເພາະຄັ້ງແຕ່ຂ້ອຍເລີ່ມເຮັດວຽກໃຫ້ເຈົ້າຂ້ອຍ ຍັງບໍ່ເຄີຍໄດ້ຮັບການຊ່ວຍເຫລືອຈາກເຈົ້າໜ້າທີ່ຂອງສະຫະຣັຖສ່ວນກ່ຽວຂ້ອງແມ່ນແຕ່ບາທດຽວເລີຍ. ຖ້າເວລາໃດຫາກ ໄດ້ນາຍແຟລງມາພ້ອມຂ້ອຍໆໄດ້ໃຊ້ຈ່າຍເປັນກໍຣະນີພິເສດເພື່ອຄວາມປອດໄພໃນການເດີນທາງ ຕ້ອງໃຊ້ເວລາເດີນ ທາງຫລາຍວັນ ແລະຈ້າງເຮືອພິເສດຈາກປາກແບງເຖິງຊຽງຂອງ.

ຂ້ອຍຊື່ ນາຍທອງວັນ ໄນໄຕຣ, ຕູ້ ປ.ນ ໕ ອາເພີຊຽງຂອງ ຈັງຫວັດຊຽງຣາຍ ໕໗໑໔໐ ໂທຣ:໕໓ ໗໙໑໐

ດ້ວຍຄວາມນັບຖືຢ່າງສູງ,

ຈາກ. [signature]

ທອງວັນ ໄນໄຕຣ